ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ອົງຄະນະພັກ ທຫລ ມີຄວາມພ້ອມ ໃນການດຳເນີນກອງປະຊຸມໃຫຍ່ຂັ້ນຂອງຕົນ.



ໃນຫວ່າງບໍ່ດົນມານີ້; ສະຫາຍ ພຸດທະໄຊ ສີວິໄລ ກຳມະການປະຈຳພັກທະນາຄານແຫ່ງ ສປປ ລາວ (ທຫລ), ຮອງຜູ້ວ່າການ ທຫລ, ຫົວໜ້າຄະນະໂຄສະນາ, ຂະບວນການ ແລະ ປ້ອງກັນ ໄດ້ກ່າວຕໍ່ຜູ້ສື່ຂ່າວ ທຫລ ວ່າ: ເພື່ອກະກຽມໃຫ້ແກ່ການເປີດກອງປະຊຸມໃຫຍ່ຜູ້ແທນຄັ້ງທີ IV ຂອງອົງຄະນະພັກ ທຫລ; ຄະນະພັກ ທຫລ ໄດ້ມີການແຕ່ງຕັ້ງຄະນະຮັບຜິດຊອບໃນແຕ່ລະຂົງເຂດວຽກງານ ເປັນຕົ້ນຄະນະຮັບຜິດຊອບເນື້ອໃນ, ຄະນະກະກຽມບຸກຄະລາກອນ, ຄະນະຮັບຜິດຊອບວຽກງານໂຄສະນາ, ຂະບວນການ ແລະ ປ້ອງກັນ, ຄະນະຮັບຜິດຊອບງົບປະມານ ແລະ ພິທີການ.

ພາຍຫຼັງມີການແຕ່ງຕັ້ງຄະນະໂຄສະນາ, ຂະບວນການ ແລະ ປ້ອງກັນ ກໍໄດ້ມີການກະກຽມ ແລະ ເຄື່ອນໄຫວ ແຕ່ປີ 2019 ເປັນຕົ້ນມາ ໂດຍໄດ້ມີການຊີ້ນຳບັນດາຮາກຖານພັກ ທີ່ຂຶ້ນກັບອົງຄະນະພັກ ທຫລ ໄດ້ສ້າງຂະບວນການ ໃຫ້ຟົດຟື້ນ ເພື່ອດຳເນີນກອງປະຊຸມໃຫຍ່ຂອງຕົນ ຊຶ່ງລວມມີບັນດາໜ້າວຽກຕົ້ນຕໍຄື: ວຽກງານໂຄສະນາ. ບັນດາຮາກຖານພັກ ໄດ້ເຜີຍແຜ່ໂຄສະນາໃຫ້ຖັນແຖວພະນັກງານສະມາຊິກພັກທີ່ຢູ່ພາຍໃຕ້ການຊີ້ນຳ-ນຳພາຂອງຕົນເຫັນໄດ້ຄວາມໝາຍ-ຄວາມສຳຄັນຂອງກອງປະຊຸມໃຫຍ່ຜູ້ແທນຄັ້ງທີ IV ຂອງອົງຄະນະພັກ ທຫລ ຊຶ່ງເປັນເຫດການ ການເມືອງທີ່ສຳຄັນ ແລະ ທັງເປັນການທົບທວນປະເມີນຄືນການຜັນຂະຫຍາຍປະຕິບັດໜ້າທີ່ການເມືອງ ກໍ່ຄືຜົນສຳເລັດຂອງການເຄື່ອນໄຫວວຽກງານຂອງບັນດາຮາກຖານພັກ, ກໍຄືຂອງຄະນະພັກ ທຫລ ໃນສະໄໝຜ່ານມາ. ພ້ອມນັ້ນ, ກໍປຸກລະດົມ ພະນັກງານສະມາຊິກພັກ ອອກແຮງງານແຂ່ງຂັນປະຕິບັດບັນດາແຜນງານໂຄງການກໍຄືການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ III ຂອງອົງຄະນະພັກ ທຫລ ໃຫ້ບັນລຸຄາດໝາຍທີ່ໄດ້ວາງໄວ້.

ເພື່ອສ້າງຜົນງານຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນຄັ້ງທີ IV ຂອງອົງຄະນະພັກ ທຫລ ທີ່ຈະເປີດຂຶ້ນໃນມໍ່ໆນີ້ ແມ່ນໄດ້ມີການຂະບວນການວຽກງານວິຊາສະເພາະ, ຂະບວນການກິລາ, ອອກແຮງງານ ແລະ ເຄື່ອນໄຫວປະກອບສ່ວນຊ່ວຍສັງຄົມ. ໃນນັ້ນ ໄດ້ຖືເອົາວຽກງານວິຊາສະເພາະເປັນໃຈກາງ. ສໍາລັບວຽກງານວິຊາສະເພາະ ພວກເຮົາໄດ້ຊີ້ນໍາບັນດາຮາກຖານພັກ ສຸມໃສ່ຈັດຕັ້ງປະຕິບັດບັນດາແຜນງານໂຄງການຂອງຕົນຢ່າງຕັ້ງໜ້າ ເປັນຕົ້ນການຈັດຕັ້ງປະຕິບັດບັນດາຄາດໝາຍມະຫາພາກທາງດ້ານເງິນຕາທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ. ໃນການຈັດສໍາມະນາ ແມ່ນໄດ້ທົບທວນວຽກງານວິຊາການໃນຫຼາຍຫົວຂໍ້ທີ່ຕິດພັນກັບໜ້າທີ່ການເມືອງຂອງອົງຄະນະພັກ ເພື່ອຖອດຖອນບົດຮຽນ ແລະ ກໍາທິດທາງເຄື່ອນໄຫວໃນຊຸມປີຕໍ່ໜ້າ.

ການສ້າງຂະບວນການກິລາ-ສິລະປະວັນນະຄະດີ; ພວກເຮົາ ໄດ້ຍູ້ແຮງໃຫ້ບັນດາໃຫ້ບັນດາຮາກຖານພັກ ສ້າງຂະບວນການກິລາ, ພົບປະແລກປ່ຽນຖອດຖອນບົດຮຽນເຊິ່ງກັນ ແລະ ກັນ, ເສີມຂະຫຍາຍຄວາມສາມັກຄີ ບົນຈິດໃຈ ມິດຕະພາບ ແລະ ສ້າງຄວາມຮັກແພງ; ຂະບວນການອອກແຮງງານ ແລະ ຂະບວນການບໍລິຈາກເລືອດໂດຍໃນວຽກງານຂະບວນການບໍລິຈາກເລືອດຜ່ານມາ ກໍ່ໄດ້ມີການຈັດຕັ້ງປະຕິບັດໄປແລ້ວຊຸດໜຶ່ງ ໂດຍມີຜູ້ເຂົ້າຮ່ວມປະກອບສ່ວນ ໃນຂະບວນການດັ່ງກ່າວຢູ່ປະມານ 150 ຄົນ ແລະ ໃນວັນທີ 14 ສິງຫາ 2020 ກໍ່ໄດ້ມີການຈັດຕັ້ງຂະບວນການບໍລິຈາກເລືອດຂຶ້ນຕື່ມອີກ ຊຶ່ງມີຜູ້ເຂົ້າຮ່ວມເກືອບ 200 ຄົນ. ສໍາລັບຂະບວນການຊ່ວຍເຫຼືອສັງຄົມກໍໄດ້ມີການລະດົມວັດຖຸປັດໃຈຈາກທັງພາກລັດ ແລະ ເອກະຊົນຊ່ວຍເຫຼືອຜູ້ທີ່ໄດ້ຮັບຜົນກະທົບຈາກໄພທໍາມະຊາດ ແລະ ຍັງໄດ້ເອົາໃຈໃສ່ ປະກອບສ່ວນເຂົ້າໃນວຽກງານຄວບຄຸມ ແລະ ປ້ອງກັນການແຜ່ລະບາດພະຍາດ COVID-19.

ສໍາລັບວຽກງານປ້ອງກັນຄະນະຂອງພວກເຮົາກໍໄດ້ຊີ້ນໍາໃຫ້ບັນດາທະນາຄານທົ່ວລະບົບໃຫ້ເອົາໃຈໃສ່ເປັນພິເສດໃນວຽກງານປ້ອງກັນຂອງຂະແໜງທະນາຄານ, ໃຫ້ເອົາໃຈໃສ່ປະຕິບັດລະບຽບການຮັກສາຄວາມປອດໄພຂອງສໍານັກງານອົງການຢ່າງເຂັ້ມງວດ ເດັດຂາດ ບໍ່ໃຫ້ເກີດເຫດການທີ່ບໍ່ດີເກີດຂຶ້ນ.

ທັງໝົດນີ້ ເປັນການລາຍງານວຽກງານການເຄື່ອນໄຫວຕົ້ນຕໍຂອງພວກເຮົາຈໍານວນໜຶ່ງ ຊຶ່ງຂ້າພະເຈົ້າ ບໍ່ສາມາດນໍາເອົາລາຍລະອຽດທັງໝົດມາເຜີຍແຜ່ໃນທີ່ນີ້ໄດ້ ເນື່ອງຈາກເວລາທີ່ຈໍາກັດ. ເຖິງຢ່າງໃດກໍ່ຕາມ ຂ້າພະເຈົ້າກໍ່ຂໍໃຊ້ຊ່ອງທາງນີ້ ເພື່ອລາຍງານໂດຍສັງເຂບກ່ຽວກັບບັນດາຂະບວນການຕ່າງໆ ທີ່ເກີດຂຶ້ນພາຍໃນ ຂົງເຂດການທະນາຄານ ເພື່ອຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນຄັ້ງທີ IV ຂອງອົງຄະນະພັກ ທຫລ.

**#ໂດຍ: ຣັດສະໝີ ດວງສັດຈະ**

# ເງິນກີບຄືກຽດສັກສີຂອງຊາດ ໃຊ້ຈ່າຍສະຫຼາດ ຊາດພັດທະນາ